**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ**

------===000===------


ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ
628 ບ້ານ: ໂພນພະເນົາ ກມ5
ຖະໜົນ: ໄກສອນພົມວິຫານ ເມືອງ: ໄຊເສດຖາ
ນະຄອນຫຼວງວຽງຈັນ ໂທ-ແຟັກ:(+856 21)418062 – 6


ເລກທີ: 0634/25 /ມທທຊ

ນະຄອນຫຼວງວຽງຈັນ, ວັນທີ: 28 ພະຈິກ 2025

# ແຈ້ງການ

**ເຖິງ:** ທ່ານ ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;
ທ່ານ ຜູ້ອຳນວຍການໃຫຍ່ຕະຫຼາດຫຼັກຊັບລາວ;
ບັນດາຜູ້ຖືຮຸ້ນ ຂອງບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ

**ເລື່ອງ:** ແຈ້ງການກ່ຽວກັບເກນການໃຫ້ສິດຜູ້ຖືຮຸ້ນສ່ວນນ້ອຍສະເໜີຊື່ບຸກຄົນເພື່ອລົງສະໝັກເປັນສະມາຊິກສະພາບໍລິຫານ ແລະ ຄຸນສົມບັດຂອງຜູ້ລົງສະໝັກເປັນສະມາຊິກສະພາບໍລິຫານຂອງບໍລິສັດ ໃນການພິຈາລະນາຄັດເລືອກຂອງການປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2025

- ອີງຕາມ ລະບຽບວ່າດ້ວຍການລາຍງານ ແລະ ເປີດເຜີຍຂໍ້ມູນ ສະບັບເລກທີ 04/ສຄຄຊ, ລົງວັນທີ 28 ມັງກອນ 2019.
- ອີງຕາມ ລະບຽບຂອງຕະຫຼາດຫຼັກຊັບລາວວ່າດ້ວຍການເປີດເຜີຍຂໍ້ມູນ ເລກທີ 008/ຕລຊລ, ລົງວັນທີ 27 ກັນຍາ 2018.

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ ຂໍຖືເປັນກຽດແຈ້ງການກ່ຽວກັບເກນການໃຫ້ສິດຜູ້ຖືຮຸ້ນສ່ວນນ້ອຍ ສະເໜີຊື່ບຸກຄົນເຂົ້າຮັບການພິຈາລະນາເລືອກຕັ້ງເປັນສະມາຊິກສະພາບໍລິຫານຂອງບໍລິສັດ ໂດຍລາຍລະອຽດມີດັ່ງນີ້:

## 1. ຈຸດປະສົງ

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ ຕ້ອງການໃຫ້ຜູ້ຖືຮຸ້ນສ່ວນນ້ອຍສະເໜີລາຍຊື່ບຸກຄົນເພື່ອເປັນສະມາຊິກສະພາບໍລິຫານ ເຊິ່ງບໍລິສັດຕ້ອງການສະແດງໃຫ້ເຫັນເຖິງຄວາມມຸ່ງໝັ້ນທີ່ຈະປະຕິບັດຕໍ່ຜູ້ຖືຮຸ້ນທຸກຄົນເທົ່າທຽມກັນ ແລະ ສະແດງເຖິງວິທີການຄັດເລືອກນັ້ນມີຂັ້ນຕອນ ແລະ ວິທີການໃນການພິຈາລະນາຊັດເຈນ ແລະ ໂປ່ງໃສ ບໍລິສັດໄດ້ກຳນົດຫຼັກເກນການໃຫ້ຜູ້ຖືຮຸ້ນສ່ວນນ້ອຍສະເໜີຊື່ບຸກຄົນ ເພື່ອລົງສະໝັກເລືອກຕັ້ງເປັນສະມາຊິກສະພາບໍລິຫານຂອງບໍລິສັດ ໃນການພິຈາລະນາຄັດເລືອກຂອງການປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2025 ເຊິ່ງຈະຊ່ວຍຄັດເລືອກບຸກຄົນທີ່ມີຄຸນສົມບັດ

ເໝາະສົມມາດຳລົງຕຳແໜ່ງເປັນສະມາຊິກສະພາບໍລິຫານບໍລິສັດ ແລະ ສາມາດປະຕິບັດໜ້າທີ່ໄດ້ຢ່າງມີປະສິດທິພາບ ເພື່ອປະໂຫຍດສູງສຸດຂອງບໍລິສັດ ແລະ ຜູ້ທີ່ມີສ່ວນໄດ້ເສຍທຸກຝ່າຍ.

**2. ຄຸນສົມບັດຂອງຜູ້ຖືຮຸ້ນທີ່ຈະສະເໜີຊື່ບຸກຄົນ ເພື່ອລົງສະໝັກເຂົ້າຮັບການພິຈາລະນາຄັດເລືອກເປັນສະມາຊິກສະພາບໍລິຫານ**

2.1 ເປັນຜູ້ຖືຮຸ້ນຂອງບໍລິສັດ ໂດຍອາດເປັນຜູ້ຖືຮຸ້ນລາຍດຽວ ຫຼື ຫຼາຍລາຍຮ່ວມກັນໄດ້

2.2 ຜູ້ຖືຮຸ້ນຂອງບໍລິສັດຕາມຂໍ້ 2.1 ຕ້ອງຖືຮຸ້ນບໍ່ໜ້ອຍກວ່າຮ້ອຍລະ 5 ຂອງຮຸ້ນບໍລິສັດທີ່ຊຳລະແລ້ວທັງໝົດ

**3. ການສະເໜີຊື່ບຸກຄົນ ເພື່ອລົງສະໝັກເຂົ້າຮັບການພິຈາລະນາເລືອກຕັ້ງເປັນສະມາຊິກສະພາບໍລິຫານ**

3.1 ຄຸນສົມບັດ ແລະ ຂໍ້ຕ້ອງຫ້າມຂອງບຸກຄົນທີ່ລົງສະໝັກເປັນສະມາຊິກສະພາບໍລິຫານ ຕ້ອງມີຄຸນສົມບັດ ແລະ ບໍ່ມີລັກສະນະຕ້ອງຫ້າມ ດັ່ງນີ້

3.1.1 ບຸກຄົນທີ່ຖືກສະເໜີຊື່ເປັນສະມາຊິກສະພາບໍລິຫານຕ້ອງມີຄຸນສົມບັດຖືກຕ້ອງ ແລະ ບໍ່ມີລັກສະນະຕ້ອງຫ້າມຕາມກົດໝາຍວ່າດ້ວຍວິສາຫະກິດ ເລກທີ 46/ສພຊ ລົງວັນທີ 26 ທັນວາ 2013 ແລະ ຂໍ້ຕົກລົງວ່າດ້ວຍສະພາບໍລິຫານ ເລກທີ 10/ຄຄຊ ລົງວັນທີ 26 ເມສາ 2019 ແລະ ກົດໝາຍທີ່ກ່ຽວຂ້ອງອື່ນໆ

3.1.2 ບຸກຄົນທີ່ຖືກສະເໜີຊື່ເປັນສະມາຊິກສະພາບໍລິຫານເພດ ຊາຍ/ຍິງ

3.1.3 ຕ້ອງມີຄວາມຮູ້, ຄວາມສາມາດ, ຄວາມເປັນອິດສະຫຼະປະຕິບັດໜ້າທີ່ສະມາຊິກສະພາບໍລິຫານດ້ວຍຄວາມລະມັດລະວັງ, ດ້ວຍຄວາມຊື່ສັດສາມາດທຸ່ມເທສະລະເວລາໄດ້ຢ່າງເຕັມທີ່, ມີອາຍຸເໝາະສົມ, ມີສຸຂະພາບຮ່າງກາຍທີ່ແຂງແຮງ ແລະ ຈິດໃຈສົມບູນສາມາດປະຊຸມສະພາບໍລິຫານຢ່າງສະໝ່ຳສະເໝີ, ມີເວລາກຽມຕົວເປັນການລ່ວງໜ້າກ່ອນການປະຊຸມ, ມີສ່ວນຮ່ວມໃນການປະຊຸມສາມາດສະແດງຄວາມຄິດເຫັນໃນທີ່ປະຊຸມ, ປະຫວັດການເຮັດວຽກມີຈາລິຍະທຳດີງາມ, ລວມທັງໄດ້ຮັບການຍອມຮັບຈາກສັງຄົມ

3.1.4 ມີຄວາມຮູ້ຄວາມສາມາດເໝາະສົມກັບທຸລະກິດຂອງບໍລິສັດ ໄດ້ແກ່: ມີຄວາມຮູ້ຄວາມຊຳນານກ່ຽວກັບທຸລະກິດເຊົ່າສິນເຊື່ອ (Leasing) ຫຼື ດ້ານການເງິນການທະນາຄານ (Finance and Banking) ຫຼື ດ້ານບັນຊີ ແລະ ກວດສອບ (Accounting and Auditing) ຫຼື ກົນລະຍຸດທາງການຕະຫຼາດ ແລະ ການແຂ່ງຂັນ (Marketing) ຫຼື ດ້ານເທັກໂນໂລຢີການສື່ສານ ແລະ ນະວັດຕະກຳ (Intelligent Technology and Innovation) ຫຼື ດ້ານປະຕິບັດການ (Operation) ຫຼື ດ້ານກົດໝາຍ (Legal).

3.2 ຜູ້ຖືຮຸ້ນທີ່ມີຄຸນສົມບັດຄົບຖ້ວນຕາມຂໍ້ 2 ຂອງຫຼັກເກນນີ້ ສາມາດສະເໜີຊື່ບຸກຄົນເພື່ອລົງສະໝັກເຂົ້າຮັບການພິຈາລະນາຄັດເລືອກເປັນສະມາຊິກສະພາບໍລິຫານໄດ້ ໂດຍສ້າງເປັນໜັງສືຂໍສະເໜີຊື່ບຸກຄົນ ພ້ອມແບບປະຫວັດ ແລະ ເອກະສານຫຼັກຖານທີ່ກ່ຽວຂ້ອງຢ່າງຄົບຖ້ວນ ແລະ ໃຫ້ຜູ້ສະໝັກສ້າງປະຫວັດຫຍໍ້ ແລະ ເອກະສານຫຼັກຖານທີ່ກ່ຽວຂ້ອງສົ່ງເຖິງບໍລິສັດ ລະຫວ່າງວັນທີ 01 ເຖິງ 15 ທັນວາ 2025 ຕາມທີ່ຢູ່ນີ້

ເລຂານຸການບໍລິສັດ
ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ
ຕັ້ງຢູ່ເຮືອນເລກທີ 628 ໜ່ວຍ 19 ບ້ານໂພນພະເນົາ ກມ5 ຖະໜົນໄກສອນພົມວິຫານ
ເມືອງ ໄຊເສດຖາ ນະຄອນຫຼວງວຽງຈັນ ສປປ ລາວ
ໂທ- ແຟັກ +856 21 418 062-6
ຫຼື ທາງ email address: ir@mahathuen.com

ດັ່ງນັ້ນ, ຈຶ່ງຂໍແຈ້ງມາຍັງທ່ານ ເພື່ອຮັບຊາບດ້ວຍ.

ແທນ ປະທານ ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ MAHATHUEN LEASING PUBLIC COMPANY ນະຄອນຫຼວງວຽງຈັນ

**ຜູ້ອຳນວຍການ**

(ທ່ານ ມານົບ ຕຣີລິດວິໄລ)